# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 08, ກໍຣະກົດ 2007 ( 07-08-2007 )

## ສແວງຫາການຮັບໃຊ້

**ຂໍ້ພຣະຄັມພີໃນບົດຮຽນ:** ກິຈການ 6:17; 9:36-40; 11:29-30

**ຄຳຖາມແຫ່ງຊີວິດ:** ພຣະເຈົ້າຢາກໃຫ້ຂ້ອຍເຮັດຫຍັງຢູ່ໃນໂບດ?

**ຄວາມຈິງໃນພຣະຄັມພີ:** ພຣະເຈົ້າຊົງຮຽກເອີ້ນພວກເຮົາແຕ່ລະຄົນໃຫ້ໃຊ້ຂອງພຣະຣາຊທານແລະຄວາມສາມາດ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂື້ນເພື່ອຊ່ອຍທ່ານໃຫ້ເຮັດພາກສ່ວນຂອງທ່ານໃນໂບດຕາມພຣະປະສົງຂອງພຣະເຈົ້າໂດຍ...

- ເຊື່ອໝັ້ນໃນການຮຽກເອີ້ນຂອງພຣະເຈົ້າເພື່ອຮັບໃຊ້ຮ່ວມກັບພຣະກາຍຂອງພຣະຄຣິດ
- ເລືອກໃຊ້ຂອງພຣະຣາຊທານແລະຄວາມຊຳນານທີ່ພຣະເຈົ້າໄດ້ປະທານໃຫ້ເພື່ອຮັບໃຊ້ຮ່ວມກັບພຣະກາຍຂອງພຣະຄຣິດໃນທາງໃດທາງນຶ່ງ.

### ບົດນຳ

ເຣ ໄດ້ຜ່ານໜ້າໂບດຫລັງນັ້ນທຸກວັນຍາມລາວໄປເຮັດວຽກ. ລາວມັກອ່ານຖ້ອຍຄຳຢູ່ທີ່ປ້າຍທາງໜ້າໂບດຊຶ່ງສະມາຊິກຂອງໂບດໄດ້ຕິດໄວ້ແລະໄດ້ປ່ຽນຖ້ອຍຄຳໃໝ່ແຕ່ລະອາທິດ.

ຮືມ!!! ລາວໃຊ້ຄວາມຄິດໜ້ອຍນຶ່ງ ໃນຂະນະທີ່ອ່ານຖ້ອຍຄຳໃນປ້າຍນັ້ນ **ການຮັບໃຊ້: ສະມາຊິກທຸກຄົນ** ລາວຄິດໃນໃຈວ່າ *"ຂ້ອຍຢາກຮູ້ວ່າມັນມີຄວາມໝາຍຄືແນວໃດ?"* ລາວຄິດບໍ່ອອກ, ແຕ່ຄິດວ່າມັນຕ້ອງສຳຄັນ.

ທ່ານຈະບອກ ເຣ ໄດ້ບໍ່ວ່າຖ້ອຍຄຳນັ້ນໝາຍຄວາມວ່າແນວໃດ? ບົດຮຽນນີ້ຈະຊ່ອຍທ່ານໃຫ້ເຂົ້າໃຈວ່າທ່ານຈະຮັບໃຊ້ແນວໃດໃນໂບດຂອງທ່ານ.

### ສຶກສາພຣະຄັມພີ

1. <u>ເຮົາສາມາດຮັບໃຊ້ໃນວຽກງານທີ່ແຕກຕ່າງກັນ</u> (ກິຈການ 6:1-7)

ຂໍ້ພຣະຄັມພີໃນອາທິດທີ່ຜ່ານມາກັບອາທິດນີ້ ທ່ານລູກາໄດ້ກ່າວເຖິງຕົວຢ່າງໃນທາງບວກ ຜູ້ມີໃຈກວ້າງຂວາງ (ບາຣະນາບາ; ອ່ານກິຈການ 4:36) ແລະຕົວຢ່າງໃນທາງລົບ(ອານາເນັຽແລະຊະຟີຣາ; ກິຈການ 5:1-9) ຕາມຕົວຢ່າງດັ່ງກ່າວນີ້ ທ່ານລູກາໄດ້ກ່າວວ່າບັນດາອັຄສາວົກໄດ້ເທສນາສັ່ງສອນ, ໄດ້ເຮັດໝາຍສຳຄັນແລະການອັສຈັນ. ບໍ່ພຽງແຕ່ເທົ່ານັ້ນ ດັ່ງທີ່ພວກເຮົາໄດ້ເຫັນໃນຂໍ້ພຣະຄັມພີນີ້ ເຖິງແມ່ນວ່າເຂົາເຈົ້າເປັນອັນນຶ່ງອັນດຽວກັນ, ໂບດຈະເຣີນຂື້ນ, ແຕ່ສຽງຈົ່ມວ່າກໍຍັງມີຢູ່. ຜູ້ນຳທີ່ສລາດຈະສາມາດເບິ່ງເຫັນວ່າການຈົ່ມປະເພດໃດທີ່ເຫັນວ່າດີທີ່ຈຳເປັນຈະຕ້ອງເອົາໃຈໃສ່.

ສະພາບຂອງໂບດໃນສມັຍເລີ້ມແຣກ ພວກຢິວທີ່ປາກພາສາກຣີກໄດ້ຈົ່ມ ວ່າພວກແມ່ໝ້າຍຂອງພວກເຂົາບໍ່ໄດ້ຮັບການລ້ຽງດູ. ພວກເຂົາຈົ່ມວ່າພວກຢິວທີ່ປາກພາສາເຮັບເຣີບໍ່ໄດ້ບໍຣິຈາກອາຫານໃຫ້ແກ່ແມ່ໝ້າຍຂອງພວກເຂົາ. ເມື່ອຄົນທີ່ມີເບື້ອງຫລັງແຕກຕ່າງກັນໄດ້ນະມັສການຮ່ວມກັນ ຈະເຮັດໃຫ້ເກີດບັນຫາແລະເກີດຄວາມເຄັ່ງຕຶງ.

ຄຣິສຕຽນໃນຍຸກນີ້ໄດ້ມີຄວາມເປັນນ້ຳນຶ່ງໃຈດຽວກັນ ໄດ້ແບ່ງປັນສິ່ງຂອງແກ່ກັນແລະກັນ (ກິຈການ 2:44-45; 4:32 ) ແຕ່ຄວາມເປັນອັນນຶ່ງອັນດຽວກັນໃນໂບດໄດ້ປ່ຽນແປງໄປຍ້ອນການເຫັນແກ່ຕົວຂອງອານາເນັຽແລະຟະຊີຣາ ( ກິຈການ 5:1-11) ຕໍ່ມາ, ໃນຂະນະທີ່ໂບດກຳລັງຈະເຣີນຂື້ນ, ສະພາບການກໍຫຍຸ້ງຍາກຂື້ນເພາະການແບ່ງປັນ ການບໍຣິຈາກແກ່ຜູ້ອຶດຫິວບໍ່ສເມີພາບກັນ.

ສິ່ງທີ່ດີທີ່ທ່ານສາມາດເຮັດໄດ້ສຳລັບໂບດຂອງທ່ານນັ້ນແມ່ນການອະທິຖານ ເພື່ອໃຫ້ຜູ້ນຳຂອງທ່ານສາມາດທີ່ຈະແກ້ໄຂບັນຫາແລະການຈົ່ມວ່າທີ່ເພິ່ນໄດ້ຍິນ. ອີກສິ່ງນຶ່ງທີ່ທ່ານສາມາດເຮັດໄດ້ກໍຄື ການຮ່ວມມືກັບຜູ້ນຳໃນໂບດຂອງທ່ານເພື່ອແກ້ໄຂບັນຫາຊ່ອຍກັນ.

ແມ່ນຜູ້ໃດໃນໂບດທີ່ບັນດາຜູ້ນຳຈະໄປພົບ ໃນເມື່ອຜູ້ນັ້ນຫຍຸ້ງຢູ່ກັບການອ້ອນວອນແລະເທສນາສັ່ງສອນ? ຜູ້ໃດກໍໄດ້ທີ່ມີຊື່ສຽງດີ, ເຕັມລົ້ນດ້ວຍພຣະວິນຍານແລະມີສະຕິປັນຍາ ແມ່ນບຸກຄົນນັ້ນທີ່ເຮົາຄວນເຂົ້າພົບໃນໂບດຂອງເຮົາ. ຄຣິສຕະຈັກສມັຍເລີ້ມແຣກ ໄດ້ເລືອກເອົາເຈັດຄົນຊຶ່ງພວກອັຄສາວົກໄດ້ແຍກອອກໄວ້ເພື່ອຮັບໃຊ້ວຽກງານພິເສດຄືເພື່ອຊ່ອຍເຫລືອບັນດາແມ່ຫມ້າຍ.

ເຮົາສາມາປູກຝັງ(ພັທນາ)ຄຸນສົມບັດດ້ານຈິດວິນຍານໃຫ້ດີຂື້ນໃນຊີວິດຂອງເຮົາ ເມື່ອໂອກາດການຮັບໃຊ້ໄດ້ມາເຖິງ ເຮົາກໍຈະເປັນຜູ້ທີ່ໄດ້ຕຽມພ້ອມແລ້ວ. ພຣະເຈົ້າຊົງມີວຽກງານການຮັບໃຊ້ສຳລັບພວກເຮົາທຸກຄົນ ແຕ່ພວກເຮົາຕ້ອງຕຽມພ້ອມ. ທຸກໂບດຍ່ອມມີບັນຫາ, ແຕ່ຖ້າເຮົາປັກຕາເບິ່ງພຣະເຈົ້າດ້ວຍການແກ້ບັນຫາເພື່ອຮັກສາຄວາມເປັນອັນນຶ່ງອັນດຽວກັນໄວ້, ການອະທິຖານ, ແລະການຮັບໃຊ້, ການແກ້ໄຂບັນຫາຕ່າງໆ ຈະເກີດຜົນດີແລະໄດ້ຮັບຊັຍຊະນະໂດຍທາງພຣະຄຸນ.

**2. ເຮົາສາມາດຮັບໃຊ້ຕາມຄວາມສາມາດຂອງເຮົາ** ( ກິຈການ 9:36-40 )

ໃນພຣະທັມກິຈການບົດທີ 7-9 ທ່ານລູກາໄດ້ຈົດບັນທຶກການພັທນາທີ່ສຳຄັນຫລາຍຢ່າງຂອງໂບດໃນສມັຍເລີ້ມແຣກ ຊຶ່ງມີ ສະເຕຟາໂນ, ຄຣິສຕຽນຄົນທຳອິດທີ່ຕາຍຍ້ອນຖືກຂົ່ມເຫງ, ໂຊໂລ (ຕໍ່ມາປ່ຽນຊື່ເປັນ ໂປໂລ), ຊຶ່ງເປັນຜູ້ປະກາດຂ່າວປະເສີດທີ່ຍິ່ງໃຫຍ່, ໂດຣະກາ ເປັນຄຣິສຕຽນຍຸກທຳອິດ ເປັນສາວົກທີ່ອາສັຍຢູ່ທ່າເຮືອທະເລໃນສມັຍບູຮານທີ່ເມືອງຢົບເປ, 35 ໄມລ໌ ໄປທາງທິດຕາເວັນຕົກສ່ຽງເຫນືອຂອງກຸງເຢຣູຊາເລັມ. ຊື່ຂອງນາງມີຄວາມຫມາຍວ່າ "ຕາບີທາ." ນາງເຄີຍ**ເຮັດແຕ່ຄຸນງາມຄວາມດີ ແລະເຄີຍໃຫ້ທານມາແລ້ວ.** ນາງໄດ້ຮັບໃຊ້ຄົນອື່ນດ້ວຍຄວາມສາມາດທີ່ພຣະເຈົ້າປະທານໃຫ້ແກ່ນາງ. ພວກເຮົາທຸກຄົນກໍມີຄວາມສາມາດທີ່ພຣະເຈົ້າໄດ້ປະທານໃຫ້. ແຕ່ບໍ່ແມ່ນທຸກຄົນໄດ້ໃຊ້ຄວາມຊຳນານ, ຄວາມສາມາດ, ທີ່ໄດ້ອົບຮົມມາ ເພື່ອຮັບໃຊ້ຄົນອື່ນ ແຕ່ຜູ້ຍິງຄົນນີ້ໄດ້ກະທຳ. ສິ່ງສຳຄັນທີ່ສຸດໃນການເປັນສາວົກຂອງພຣະເຢຊູນັ້ນແມ່ນການໃຊ້ຄວາມສາມາດເພື່ອພຣະອົງ.

ຫລັງຈາກໂດຣະກາໄດ້ເຈັບປ່ວຍລົງແລະເສັຽຊີວິດ ອັຄສາວົກຄົນອື່ນໄດ້ສົ່ງ ເປໂຕ ມາ ເມື່ອມາຮອດແລ້ວບັນດາແມ່ຫມ້າຍພາກັນຢືນຮ້ອງໄຫ້ຊີ້ໃຫ້ເພິ່ນເບິ່ງ**ເສື້ອຜ້າຕ່າງໆທີ່ໂດຣະກາໄດ້ເຮັດເມື່ອຍັງຢູ່ນຳເຂົາ.** ໂດຣະກາໄດ້ຊ່ອຍເຂົາຢ່າງຫລວງຫລາຍໃນສິ່ງທີ່ຈຳເປັນ. ເປໂຕໄດ້ອ້ອນວອນແລະກາຍເປັນເຄື່ອງມືອັນມີພລັງຂອງພຣະເຈົ້າ ໄດ້ຊ່ອຍໂດຣະກາໃຫ້ຄືນມີຊີວິດຂື້ນມາໃຫມ່ອີກ. ໂດຣະກາບໍ່ໄດ້ດຳເນີນຊີວິດເພື່ອໃຫ້ຄົນອື່ນສົນໃຈໃນຕົວລາວ ຜູ້ຍິງທີ່ຖ່ອມຕົວຄົນນີ້ອາດຈະບໍ່ຮູ້ວ່າຊື່ຂອງລາວໄດ້ບັນທຶກໄວ້ໃນພຣະຄັມພີ. ນາງບໍ່ຮູ້ເລີຍວ່າມີຫລາຍຄົນໃຫ້ກຽດແກ່ຊື່ຂອງນາງແລະວຽກງານທີ່ນາງໄດ້ກະທຳ ຄືໄດ້ຕັ້ງຊື່ຫ້ອງຮຽນວັນອາທິດ ຫລືຫ້ອງການ ໂດຍໃຊ້ຊື່ຂອງນາງ.

ໂດຣະກາໄດ້ກາຍເປັນຜູ້ທີ່ດົນໃຈແກ່ຜູ້ທີ່ເຊື່ອທັງຫລາຍໃນຫລາຍຍຸກຫລາຍສມັຍ ໃນການຮັບໃຊ້ດ້ວຍຄວາມສາມາດ ທີ່ພຣະເຈົ້າຢາກຈະໃຫ້ເຮົາປັບປຸງພັທນາ. ການຮັບໃຊ້ຂອງເຮົາຄວນຈະຖວາຍກຽດແດ່ພຣະເຈົ້າສເມີແລະຊ່ອຍເຫລືອຜູ້ຈຳເປັນຂາດເຂີນ. ເມື່ອເຮົາໃຊ້ສິ່ງທີ່ພຣະເຈົ້າຊົງປະທານໃຫ້ໃນກໍຣະນີນີ້ ພວກເຮົາກໍເປັນທີ່ພຣະພອນໄປສູ່ຄົນທັງຫລາຍຢ່າງແທ້ຈິງ.

**3. ເຮົາສາມາດຮັບໃຊ້ດ້ວຍການໃຫ້** ( ກິຈການ 11:29-30 )

ບັນດາຜູ້ທີ່ເຊື່ອໄດ້ຄົ້ນພົບວ່າ ຂ່າວປະເສີດບໍ່ໄດ້ຈຳກັດຢູ່ສະເພາະຄົນຍິວເທົ່ານັ້ນ ( ກິຈການ 10:1-48) ໄດ້ເກີດມີການຂົ່ມເຫັງບັນດາຜູ້ທີ່ເຊື່ອເຫລົ່ານີ້ ຫລາຍຄົນຕ້ອງຫນີອອກຈາກກຸງເຢຣູຊາເລັມ. ແຕ່ຢ່າງໃດກໍຕາມ, ເຂົາເຈົ້າໄດ້ປະກາດຂ່າວປະເສີດໃນທຸກໆ ບ່ອນທີ່ເຂົາເຈົ້າໄປ. ໂບດໃຫມ່ຫລາຍແຫ່ງໄດ້ຖືກສ້າງຂື້ນ, ໂບດນຶ່ງໃນຈຳນວນຫລາຍໂບດແມ່ນຢູ່ທີ່ເມືອງອັນຕີໂອກ. ຜູ້ປະກາດພຣະທັມ ອະຄາໂບ ໄດ້ບອກບັນດາຜູ້ທີ່ເຊື່ອເຫລົ່ານີ້ວ່າ "ຈະເກີດການອຶດ

ຢາກຢ່າງໃຫຍ່ທົ່ວໂລກ(ໂຣມັນ) " (ກິຈການ 11:28) ຜູ້ຊ່ຽວຊານທາງພຣະຄັມພີເຊື່ອວ່າການອຶດຢາກໄດ້ເກີດຂຶ້ນປະມານປີ ຄ.ສ. 46. ດ້ວຍເຫດນັ້ນ, ຈາກຄວາມສາມາດຂອງແຕ່ລະຄົນ, ເຂົາເຈົ້າໄດ້ບໍຣິຈາກຕາມກໍາລັງ ເພື່ອຝາກໄປຊ່ອຍບັນເທົາທຸກພວກພີ່ນ້ອງທີ່ຢູ່ໃນແຂວງຢູດາຍ.

ຄຣິສຕະຈັກສມັຍເລີ້ມແຣກໃນກຸງເຢຣູຊາເລັມ ໄດ້ຮັບການຊ່ອຍເຫລື່ອຈາກໂບດໃຫມ່ທີ່ຕັ້ງຂຶ້ນໂດຍຜູ້ທີ່ເຊື່ອທີ່ໄດ້ອອກໄປປະກາດຂ່າວປະເສີດຕາມເມືອງຕ່າງໆ. ເງິນໄດ້ໄຫລໄປໃນທິດທາງກົງກັນຂ້າມກັບທີ່ພວກເຮົາເຄີຍເຫັນໃນສມັຍໃຫມ່ນີ້. ໂບດສມັຍເລີ້ມແຣກໄດ້ແນໃສ່ການຊ່ອຍເຫລືອໂບດອື່ນໆ ຂ້າງນອກ ແລະຈະບໍ່ພົບເຫັນເລີຍວ່າມີການເຫັນແກ່ຕົວໃນການຮັບໃຊ້ຂອງບັນດາຜູ້ທີ່ເຊື່ອໃນສມັຍນັ້ນ.

ເມື່ອພັຍພິບັດອັນຮ້າຍແຮງເກີດຂຶ້ນໃນປະເທດເຮົາ (ສະຫະຣັດ). ພະຍຸ ແຄັດທຣີນາ ໄດ້ພັດທໍາລາຍຊາຍຝັ່ງຣັດມິສຊິສຊິບປີ ໃນເດືອນສິງຫາ 2005, ຄົນຈໍານວນຫລາຍຕ້ອງການຄວາມຊ່ອຍເຫລືອ. ມີປະເທດນຶ່ງທີ່ໄດ້ສົ່ງການຊ່ອຍເຫລືອເຂົ້າມາແມ່ນປະເທດ ຢູເຄຣນ. ຣັດມິສຊິສຊິບປີ ເຄີຍເຮັດວຽກຮ່ວມກັບປະເທດຢູເຄຣນ ຄືໄດ້ສົ່ງການຊ່ອຍເຫລືອໄປຊ່ອຍຜູ້ອາສາສມັກເພື່ອຊ່ອຍບັນດາຜູ້ທີ່ເຊື່ອໃນປະເທດນັ້ນ. ເມື່ອບັນດາຜູ້ທີ່ເຊື່ອໃນປະເທດຢູເຄຣນໄດ້ຍິນຂ່າວພັຍພິບັດທີ່ເກີດຂຶ້ນໃນສະຫະຣັດ ເຂົາເຈົ້າໄດ້ຮິບໂຮມເອົາການຊ່ອຍເຫລືອສົ່ງມາຊ່ອຍພວກເຮົາ. ຫລາຍໆ ຣັດກໍໄດ້ສົ່ງກຸ່ມຜູ້ຊ່ອຍເຫລືອໄປຊ່ອຍຕາມຊາຍຝັ່ງທີ່ຖືກພະຍຸເພື່ອໃຫ້ຄວາມຫວັງແກ່ເຂົາເຈົ້າ. ການຊ່ອຍເຫລືອກໍມີຫລາຍຮູບແບບ. ເງິນແມ່ນປະເພດນຶ່ງຂອງການຊ່ອຍເຫລືອ ແລະເປັນປັດຈັຍທີ່ສົ່ງໃຫ້ງ່າຍ ແຕ່ພວກເຮົາກໍຄວນຊ່ອຍທາງດ້ານເວລາ, ອາຫານ, ແລະເຄື່ອງໃຊ້ຈໍາເປັນອື່ນໆ ນໍາ. ຜູ້ອາສາສມັກຫລາຍພັນຄົນໄດ້ສະລະເວລາແລະໃຊ້ຄວາມສາມາດໃນການຊ່ອຍເຫລືອຕາມຊາຍຝັ່ງເພື່ອຊ່ອຍເຫລືອຫລັງຈາກໄດ້ຖືກທໍາລາຍຈາກພະຍຸແຄັດທຣີນາ.

ການໃຫ້ (ຊ່ອຍເຫລືອ) ຂອງເຮົາບໍ່ຄວນຈະຈໍາກັດຕໍ່ບັນດາເພື່ອນຜູ້ທີ່ເຊື່ອດ້ວຍກັນ. ແທ້ຈິງແລ້ວ, ການແບ່ງປັນສິ່ງຂອງກັບຜູ້ທີ່ມີຄວາມເຊື່ອແຕກຕ່າງຈາກເຮົາຈະຊ່ອຍໃຫ້ຜູ້ຫລົງເສັຽເຫລົ່ານັ້ນຍອມຮັບເຮົາເມື່ອພວກເຮົາແບ່ງປັນຂ່າວປະເສີດກັບເຂົາເຈົ້າ. ຄວາມເປັນອັນນຶ່ງອັນດຽວກັນໃນທໍານອງນີ້ໄດ້ຊີ້ໃຫ້ເຫັນເຖິງຄວາມຮັກຂອງພຣະຄຣິດຢູ່ທ່າມກາງບັນດາຜູ້ທີ່ເຊື່ອ. ການເຮັດງານໃນພຣະຣາຊອານາຈັກຂອງພຣະເຈົ້າ, ພວກເຮົາທັງຫມົດເປັນຜູ້ຮ່ວມວຽກງານຮັບໃຊ້ນໍາກັນເພື່ອຊ່ອຍເຫລືອຊຶ່ງກັນແລະກັນ.

## ບົດຮຽນຊີວິດ

ບໍ່ມີຜູ້ທີ່ເຊື່ອຄົນໃດທີ່ຖືກຮຽກເອີ້ນມາພຽງແຕ່ໃຫ້ເປັນຜູ້ຊົມ(ນັ່ງເບິ່ງ)ເທົ່ານັ້ນ. ວຽກງານການຮັບໃຊ້ບໍ່ໄດ້ຈໍາກັດຢູ່ກັບບັນດາຜູ້ເທສນາ, ຜູ້ສິດສອນ, ຜູ້ຮ້ອງເພງ ເທົ່ານັ້ນ. ເພາະວ່າວຽກງານການຮັບໃຊ້ເປັນວຽກງານທີ່ມີຄວາມສໍາຄັນຫລາຍ, ດັ່ງນັ້ນຜູ້ທີ່ເຊື່ອທຸກຄົນຈຶ່ງຖືກຮຽກເອີ້ນມາຮັບໃຊ້ຕາມສະຕິປັນຍາແລະຄວາມສາມາດຂອງໃຜລາວເພື່ອອົງພຣະເຢຊູຄຣິດ. ວຽກງານການຮັບໃຊ້ທີ່ຍິ່ງໃຫຍ່ທີ່ສຸດຂອງໂບດແມ່ນຢູ່ນອກໂບດ. ເກືອບທຸກໆ ສິ່ງທີ່ເຮົາໄດ້ກະທໍາສາມາດທີ່ຈະເອີ້ນໄດ້ວ່າເປັນວຽກງານການຮັບໃຊ້ ຖ້າວຽກນັ້ນຫາກຖວາຍກຽດແດ່ພຣະເຈົ້າແລະຮັບໃຊ້ຄົນທັງປວງ. ຈົ່ງຈື່ໄວ້ວ່າ.....

- ພຣະເຈົ້າຊົງຮຽກເອີ້ນທ່ານມາຮັບໃຊ້ພຣະອົງດ້ວຍການຮັບໃຊ້ຄົນອື່ນ
- ພຣະເຈົ້າຊົງປະທານຂອງພຣະຣາຊທານແລະຄວາມສາມາດໃຫ້ທ່ານເພື່ອຮັບໃຊ້ຄົນອື່ນ
- ພຣະເຈົ້າມີວຽກງານການຮັບໃຫ້ໃຫ້ພວກເຮົາແຕ່ລະຄົນເຮັດ
- ພຣະເຈົ້າຊົງຮຽນເອີ້ນພວກເຮົາໃຫ້ຮັບໃຊ້ທັງຜູ້ທີ່ເຊື່ອແລະຜູ້ທີ່ບໍ່ເຊື່ອ